**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 4186/ກຊສ

ນະຄອນຫຼວງວຽງຈັນ, ວັນທີ 14 ພະຈິກ 2024

# ຂໍ້ຕົກລົງ
## ວ່າດ້ວຍການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມ ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍພິຈາລະນາຮັບຮອງການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024;
- ອີງຕາມ ໜັງສືສະເໜີຂອງກົມທີ່ດິນ ສະບັບເລກທີ 5402/ກຊສ.ກທດ, ລົງວັນທີ 13 ພະຈິກ 2024.

## ລັດຖະມົນຕີ ຕົກລົງ:
### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ການພິມເນື້ອໃນລະອຽດຕາມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນດັ່ງກ່າວ ເພື່ອນຳໃຊ້ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນການຮັບຮູ້ສິດນຳໃຊ້ທີ່ດິນຂອງປະຊາຊົນທີ່ໄດ້ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ກ່ອນກຳນົດເຂດດັ່ງກ່າວເປັນທີ່ດິນປ່າໄມ້ ໂດຍມີກຳນົດເວລາ, ເງື່ອນໄຂ ແລະ ໃຫ້ປະຊາຊົນໃນເຂດດັ່ງກ່າວມີສ່ວນຮ່ວມໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ປະ ກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມແຫ່ງຊາດ.

**ມາດຕາ 2 ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ**

ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແມ່ນ ເອກະສານທີ່ບັນທຶກຂໍ້ມູນຈາກການຂຶ້ນທະບຽນອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຕາມເລກລຳດັບໂດຍມີລາຍເຊັນ ແລະ ຕາປະທັບ ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ.

ໃບຢັ້ງຢືນການນຳໃຊ້ທີ່ດິນ ແມ່ນ ເອກະສານທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວ ກ່ຽວກັບສິດໃນການນຳໃຊ້ທີ່ດິນປ່າໄມ້ ຊຶ່ງໄດ້ຄັດສຳເນົາຢ່າງຖືກຕ້ອງຈາກໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງສິດໃນການນຳໃຊ້ທີ່ດິນປ່າໄມ້ ພຽງໃບດຽວ ເພື່ອນຳໃຊ້ເປັນຫຼັກຖານ ຕາມ ກຳນົດເວລາບໍ່ເກີນ 50 ປີ, ມີເນື້ອທີ່ ບໍ່ເກີນ 20 ເຮັກຕາ ຕໍ່ ຄອບຄົວ ແລະ ສາມາດຕໍ່ໄດ້ຕາມການເຫັນດີຂອງອົງການລັດທີ່ກ່ຽວຂ້ອງ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບພະນັກງານ-ລັດຖະກອນ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການກຳນົດເນື້ອໃນແບບພິມໃບທະບຽນຍັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ, ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ

**ມາດຕາ 4 ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ**

ລັກສະນະພາຍນອກ ຂອງໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ປະກອບມີ ຂະໜາດເຈັ້ຍ A4 (210 X 297 ມີລີແມັດ), ດ້ານໜ້າເປັນສີຂາວ, ເຄື່ອງໝາຍຊາດ, ສັນຍາລັກລູກສອນຊີ້ບອກໄປທາງທິດເໜືອຂອງແຜນທີ່ປະເທດ, ຂອບເປັນສີເຫຼືອງທີ່ມີລາຍຂອບເປັນສີຂຽວ ແລະ ດ້ານຫຼັງໄດ້ກຳນົດ ສິດ, ພັນທະ ແລະ ຂໍ້ຫ້າມຂອງຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ທີ່ດິນ.

ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ມີເນື້ອໃນອັນດຽວກັນ ຊຶ່ງປະກອບມີດັ່ງນີ້:

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ;
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ;
3. ເລກທີ;
4. ອອກຄັ້ງທີ;
5. ບາໂຄດ;
6. ທີ່ຕັ້ງຕອນດິນ;
7. ແຂວງ/ນະຄອນຫຼວງວຽງຈັນ;
8. ເມືອງ/ເທດສະບານ/ນະຄອນ;
9. ບ້ານ;
10. ໜ່ວຍ;
11. ອອກໃຫ້ແກ່;
12. ວັນເດືອນປີເກີດ, ສັນຊາດ, ອາຊີບ;
13. ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ເມືອງ, ແຂວງ;
14. ຊື່ ແລະ ນາມສະກຸນ ຜົວ ຫຼື ເມຍ, ວັນເດືອນປີເກີດ;
15. ສັນຊາດ, ອາຊີບ;
16. ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້;
17. ຖານະຄວາມເປັນເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້;
18. ປະເພດທີ່ດິນ, ເຂດ;
19. ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້;

20. ນອນໃນເຂດທີ່ດິນປ່າໄມ້;

21. ປື້ມທະບຽນໃບຢັ້ງຢືນທີ່ດິນ ເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ;

22. ຕອນດິນເລກທີ, ເນື້ອທີ່ດິນ (ຕາແມັດ);

23. ມາດຕາສ່ວນ;

24. ແຜນທີ່ຕອນດິນ;

25. ອອກໃຫ້ທີ່, ວັນທີ, ເດືອນ, ປີ, ລາຍເຊັນ ແລະ ຕາປະທັບຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ.

ໃຫ້ນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg).

**ມາດຕາ 5 ການຈັດພິມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ**

ກົມທີ່ດິນ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຈັດພິມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ, ແລ້ວຈັດສົ່ງໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ເພື່ອນຳສົ່ງໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ. ສຳລັບ ການພິມຕາມແບບພິມ ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ແມ່ນປະຕິບັດຕາມມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ ອອກແຈ້ງການໃຫ້ທຸກພາກສ່ວນພາຍໃນທ້ອງຖິ່ນຂອງຕົນ ໄດ້ຮັບຊາບ ກ່ຽວກັບການນຳໃຊ້ແບບພິມ ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ຕາມຂໍ້ຕົກລົງສະບັບນີ້.

## ໝວດທີ 3
## ການພິມເນື້ອໃນລະອຽດ ໃສ່ແບບພິມ
## ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ

**ມາດຕາ 6 ການພິມເນື້ອໃນລະອຽດໃສ່ແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ**

ການພິມເນື້ອໃນລະອຽດໃສ່ແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ໃຫ້ນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg) ໂດຍປະຕິບັດ ດັ່ງນີ້:

**ກ. ການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ແກ່ ອົງການຈັດຕັ້ງພັກ-ລັດ:**

**1. ເລກທີ:**

ເລກທີ ໃຫ້ພິມຕາມເລກລຳດັບການອອກໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ແຕ່ລະຕອນພາຍໃນບ້ານ.

**2. ອອກຄັ້ງທີ:**

ອອກຄັ້ງທີ ໃຫ້ພິມຈຳນວນຄັ້ງ ຂອງການອອກໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ທີ່ມີການປ່ຽນແປງໃບຢັ້ງຢືນການນຳໃຊ້ທີ່ດິນແຕ່ລະຄັ້ງ ແລະ ໃຫ້ພິມເປັນເລກສາກົນ (ເລີ່ມຈາກລຳດັບທີ 1, 2, 3 ແລະ ຕໍ່ໆ ໄປ);

**3. ທີ່ຕັ້ງຕອນດິນ:**

ທີ່ຕັ້ງຕອນດິນ ແມ່ນໃຫ້ພິມຕົວເລກລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່ ໂດຍມີ ເກົ້າ ຕົວເລກ ເຊັ່ນ: ສອງ ຕົວເລກທຳອິດ ແມ່ນລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ສາມຕົວເລກທາງກາງ ແມ່ນ ລະຫັດ ເມືອງ, ເທດສະບານ, ນະຄອນ ແລະ ສີ່ ຕົວເລກສຸດທ້າຍ ແມ່ນ ລະຫັດ ບ້ານ ບ່ອນທີ່ດິນຕັ້ງຢູ່;

**4. ອອກໃຫ້ແກ່:**

4.1 ສຳລັບ ອົງການຈັດຕັ້ງພັກ, ລັດ ໃຫ້ພິມຊື່ຂອງອົງການຈັດຕັ້ງດັ່ງກ່າວເລີຍ;

4.2 ສຳລັບ ລວມໝູ່ ແມ່ນ ໃຫ້ພິມຊື່ບ້ານ ຫຼື ຫຼາຍບ້ານ;

**5. ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້:**

ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້ ໃຫ້ພິມຕາມຊື່ຂອງຂໍ້ຕົກລົງ ໂດຍໃສ່ເລກທີ, ລົງວັນທີຂອງຂໍ້ຕົກລົງດັ່ງກ່າວ.

**6. ປະເພດທີ່ດິນ:**

ປະເພດທີ່ດິນ ໃຫ້ພິມຊື່ຕາມແຕ່ລະປະເພດທີ່ດິນປ່າໄມ້ ເຊັ່ນ ປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນລະດັບແຂວງ, ເມືອງ ແລະ ບ້ານ; ປ່າສະຫງວນແຫ່ງຊາດ, ປ່ານສະຫງວນລະດັບແຂວງ, ເມືອງ ແລະ ບ້ານ ແລະ ປ່າຜະລິດ;

ສຳລັບເຂດ ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງພຽງ, ພູພຽງ ແລະ ພູດອຍ ພ້ອມກັນນັ້ນ ໃຫ້ພິມຕື່ມ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ. ຕົວຢ່າງ ເຂດທົ່ງພຽງ (ຕົວເມືອງ).

**7. ເປົ້າໝາຍການນຳໃຊ້:**

7.1 ສຳລັບ ອົງການຈັດຕັ້ງພັກ, ລັດ, ໃຫ້ພິມຕາມເປົ້າໝາຍຂອງການມອບສິດນຳໃຊ້ທີ່ດິນປ່າໄມ້ ເປັນຕົ້ນ ທຳການຜະລິດການກະສິກຳ, ປູກໄມ້; ມີກຳນົດເວລາບໍ່ເກີນ.....ປີ;

7.2 ສຳລັບ ລວມໝູ່ ໃຫ້ພິມຕາມເປົ້າໝາຍຂອງການມອບສິດນຳໃຊ້ທີ່ດິນປ່າໄມ້ ເປັນຕົ້ນ ທຳການຜະລິດການກະສິກຳ, ປູກໄມ້, ທີ່ດິນປ່າຊ້າ, ປ່າສັກສິດ.

**8. ປຶ້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ:**

ປຶ້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ ໃຫ້ປະຕິບັດ ດັ່ງນີ້:

8.1 ປຶ້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ ໃຫ້ພິມຕາມເລກລຳດັບຂອງປຶ້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນ;

8.2 ໃບທີ ໃຫ້ພິມຕາມເລກລຳດັບຂອງເລກທີໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ;

8.3 ແຜນທີ່ຕາດິນເລກທີ ແມ່ນ ໃຫ້ພິມຂໍ້ມູນຕາມແບບພິມ “ກ 2”.

**9. ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ:**

ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ ໃຫ້ປະຕິບັດ ດັ່ງນີ້:

9.1 ຕອນດິນເລກທີ ແມ່ນ ໃຫ້ພິມຂໍ້ມູນຕາມແບບພິມ “ກ 2”;

9.2 ເນື້ອທີ່ດິນ ແມ່ນ ໃຫ້ພິມຂໍ້ມູນຕາມແບບພິມ “ກ 2” ໂດຍໃຫ້ພິມຫົວໜ່ວຍເປັນຕາແມັດ;

9.3 ມາດຕາສ່ວນ ແມ່ນ ໃຫ້ພິມຂໍ້ມູນຕາມແບບພິມ “ກ 2”.

10. **ອອກໃຫ້ທີ່:**

ອອກໃຫ້ທີ່ ແມ່ນ ໃຫ້ພິມຊື່ ເມືອງ/ເທດສະບານ/ນະຄອນ.

11. **ວັນທີ ເດືອນ ປີ:**

ວັນທີ ເດືອນ ປີ ແມ່ນ ໃຫ້ພິມຕາມວັນທີ່ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ລົງລາຍເຊັນ.

ໃນກໍລະນີຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ມີການມອບສິດໃຫ້ຜູ້ຮອງຮັບຜິດຊອບວຽກງານແທນຊົ່ວຄາວ ກ່ອນເຊັນໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ຂຽນ ຄຳວ່າ "ເຊັນແທນ" ຢູ່ທາງໜ້າຕຳແໜ່ງຫົວໜ້າຫ້ອງການ ພ້ອມທັງຂຽນ ຄຳວ່າ "ຮອງຫົວໜ້າຫ້ອງການ" ໃສ່ກ້ອງຫົວໜ້າຫ້ອງການ.

**ຂ. ການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ແກ່ ບຸກຄົນ:**

1. **ເລກທີ:**

ເລກທີ ໃຫ້ພິມຕາມເລກລຳດັບການອອກໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ແຕ່ລະຕອນພາຍໃນບ້ານ.

2. **ອອກຄັ້ງທີ:**

ອອກຄັ້ງທີ ໃຫ້ພິມຈຳນວນຄັ້ງ ຂອງການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ທີ່ມີການປ່ຽນແປງໃບຢັ້ງຢືນການນຳໃຊ້ທີ່ດິນແຕ່ລະຄັ້ງ ແລະ ໃຫ້ພິມເປັນເລກສາກົນ (ເລີ່ມຈາກລຳດັບທີ 1, 2, 3 ແລະ ຕໍ່ໆໄປ).

3. **ທີ່ຕັ້ງຕອນດິນ:**

ທີ່ຕັ້ງຕອນດິນ ໃຫ້ພິມຕົວເລກລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່ ໂດຍມີ ເກົ້າ ຕົວເລກ ເຊັ່ນ ສອງ ຕົວເລກທຳອິດ ແມ່ນລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ສາມ ຕົວເລກທາງກາງ ແມ່ນ ລະຫັດ ເມືອງ, ເທດສະບານ, ນະຄອນ ແລະ ສີ່ ຕົວເລກສຸດທ້າຍ ແມ່ນ ລະຫັດ ບ້ານ ບ່ອນທີ່ດິນຕັ້ງຢູ່.

4. **ອອກໃຫ້ແກ່:**

ອອກໃຫ້ແກ່ ໃຫ້ພິມຊື່ເຈົ້າຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້ ຕາມແຕ່ລະກໍລະນີ ດັ່ງນີ້:

4.1 ຖ້າເປັນຊັບເດີມ ໃຫ້ພິມຊື່ ແລະ ນາມສະກຸນຂອງຜົວ ຫຼື ເມຍ ຫຼື ບຸກຄົນທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນ;

4.2 ຖ້າເປັນສິນສົມສ້າງ ໃຫ້ພິມທັງຊື່ຜົວ ແລະ ຊື່ເມຍໃສ່. ສຳລັບຜົວ ຫຼື ເມຍທີ່ເປັນຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຫຼື ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ເຖິງແມ່ນວ່າເປັນສິນສົມສ້າງກໍຕາມ ແມ່ນບໍ່ໃຫ້ພິມຊື່ຮ່ວມໃນໃບຢັ້ງຢືນການນຳໃຊ້ທີ່ດິນ;

4.3 ຖ້າເປັນສິດນຳໃຊ້ທີ່ດິນຮ່ວມກັນ ແມ່ນ ໃຫ້ພິມຊື່ເຈົ້າຂອງສິດນຳໃຊ້ທີ່ດິນແຕ່ລະຄົນ (ຜູ້ທີ່ມີສິດນຳໃຊ້ທີ່ດິນຮ່ວມກັນມີແຕ່ພົນລະເມືອງລາວເທົ່ານັ້ນ).

ສຳລັບ ຊື່ ແລະ ນາມສະກຸນ ຂອງເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້ ໃຫ້ເອົາຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ.

5. **ວັນ ເດືອນ ປີເກີດ, ສັນຊາດ ແລະ ອາຊີບ:**

ວັນ ເດືອນ ປີເກີດ, ສັນຊາດ ແລະ ອາຊີບ ໃຫ້ພິມຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຂອງຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້. ໃນກໍລະນີຖ້າເປັນສິດນຳໃຊ້ທີ່ດິນຮ່ວມກັນ ໃຫ້ພິມຂໍ້ມູນ ວັນ ເດືອນ ປີເກີດ, ສັນຊາດ ແລະ ອາຊີບ ຂອງຜູ້ທີ່ມີຊື່ທຳອິດຢູ່ໃນໃບຢັ້ງຢືນການນຳໃຊ້ທີ່ດິນ.

6. **ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ເມືອງ, ແຂວງ:**

ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ເມືອງ, ແຂວງ ໃຫ້ພິມຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຂອງເຈົ້າຂອງສິດນຳໃຊ້ທີ່ດິນ. ໃນກໍລະນີຢູ່ນະຄອນຫຼວງວຽງຈັນ ແມ່ນ ບໍ່ໃຫ້ພິມ ຄຳວ່າ ແຂວງ ໂດຍໃຫ້ພິມ ຄຳວ່າ ນະຄອນຫຼວງວຽງຈັນ.

ຖ້າກໍລະນີເຈົ້າຂອງສິດນຳໃຊ້ທີ່ດິນຮ່ວມ ໃຫ້ພິມຂໍ້ມູນຂອງຜູ້ທີ່ມີຊື່ທຳອິດຢູ່ໃນໃບຢັ້ງຢືນການນຳໃຊ້ທີ່ດິນ.

**7. ຊື່ ແລະ ນາມສະກຸນ, ວັນ ເດືອນ ປີເກີດ ຂອງຜົວ ຫຼື ເມຍ:**

ຊື່ ແລະ ນາມສະກຸນ, ວັນ ເດືອນ ປີເກີດ ຂອງຜົວ ຫຼື ເມຍ ໃຫ້ພິມຊື່ ແລະ ນາມສະກຸນ, ວັນ ເດືອນ ປີເກີດ ຂອງຜົວ ຫຼື ເມຍ ຕາມບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ.

**8. ສັນຊາດ ແລະ ອາຊີບ:**

ສັນຊາດ ແລະ ອາຊີບ ໃຫ້ພິມຕາມບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ຂອງຜົວ ຫຼື ເມຍ ເຖິງຈະເປັນຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ກໍຕາມ.

**9. ການໄດ້ມາຂອງສິດນຳໃຊ້ທີ່ດິນ:**

ການໄດ້ມາຂອງສິດນຳໃຊ້ທີ່ດິນ ໃຫ້ພິມຕາມການໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້ ເປັນຕົ້ນ ໄດ້ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ກ່ອນການກຳນົດເຂດດັ່ງກ່າວເປັນທີ່ດິນປ່າໄມ້, ໄດ້ຈາກການຈັດສັນທີ່ດິນຂອງລັດ, ໄດ້ຈາກການຕົກລົງຂອງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ, ການສືບທອດສິດນຳໃຊ້ທີ່ດິນ, ການມອບ ຫຼື ຍົກ ສິດນຳໃຊ້ທີ່ດິນປ່າໄມ້ໃຫ້ຕາມສາຍຍາດ.

**10. ຖານະຄວາມເປັນເຈົ້າຂອງສິດນຳໃຊ້ທີ່ດິນ:**

ຖານະຄວາມເປັນເຈົ້າຂອງສິດນຳໃຊ້ທີ່ດິນ ແມ່ນ ໃຫ້ພິມ ຄຳວ່າ ຊັບເດີມ ຫຼື ສິນສົມສ້າງ ຫຼື ສິດນຳໃຊ້ທີ່ດິນຮ່ວມກັນ.

**11. ປະເພດທີ່ດິນ, ເຂດ:**

ປະເພດທີ່ດິນ ໃຫ້ພິມຊື່ຕາມແຕ່ລະປະເພດທີ່ດິນປ່າໄມ້ ເຊັ່ນ ປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນລະດັບແຂວງ, ເມືອງ ແລະ ບ້ານ; ປ່າສະຫງວນແຫ່ງຊາດ, ປ່ານສະຫງວນລະດັບແຂວງ, ເມືອງ ແລະ ບ້ານ ແລະ ປ່າຜະລິດ

ສຳລັບເຂດ ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງພຽງ, ພູພຽງ ແລະ ພູດອຍ ພ້ອມກັບນັ້ນ ໃຫ້ພິມຕື່ມ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ. ຕົວຢ່າງ ເຂດທົ່ງພຽງ (ຕົວເມືອງ).

**12. ເປົ້າໝາຍການນຳໃຊ້:**

ເປົ້າໝາຍການນຳໃຊ້ທີ່ດິນ ໃຫ້ພິມຄຳວ່າ ທຳການຜະລິດກະສິກຳ ເຮັດໄຮ່ ແລະ ເຮັດສວນ ທີ່ມີລັກສະນະແບບໝູນວຽນ, ທົ່ງຫຍ້າລ້ຽງສັດ, ທີ່ດິນປອກໂລ້ນ, ປູກໄມ້ທຸກຊະນິດ ແລະ ທີ່ດິນອື່ນ ຕາມແຕ່ລະກໍລະນີ; ກຳນົດເວລາ .... ປີ.

**13. ປື້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ:**

ປື້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ ໃຫ້ປະຕິບັດ ດັ່ງນີ້:

13.1 ປື້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ ໃຫ້ພິມຕາມເລກລຳດັບຂອງປື້ມທະບຽນຢັ້ງຢືນການນຳໃຊ້ທີ່ດິນ;

13.2 ໃບທີ ໃຫ້ພິມຕາມລຳດັບຂອງເລກທີໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ;

13.3 ແຜນທີ່ຕາດິນເລກທີ ແມ່ນໃຫ້ພິມລະອຽດຕາມແບບພິມ "ກ 2".

**14. ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ:**

ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ ໃຫ້ປະຕິບັດ ດັ່ງນີ້:

14.1 ຕອນດິນເລກທີ ແມ່ນ ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

14.2 ເນື້ອທີ່ດິນ ແມ່ນ ໃຫ້ພິມຂໍ້ມູນຕາມແບບພິມ “ກ 2” ໂດຍໃຫ້ພິມຫົວໜ່ວຍເປັນຕາແມັດ;

14.3 ມາດຕາສ່ວນ ແມ່ນ ໃຫ້ພິມຂໍ້ມູນຕາມແບບພິມ “ກ 2”.

**15. ອອກໃຫ້ທີ່:**

ອອກໃຫ້ທີ່ ໃຫ້ພິມຊື່ເມືອງ/ເທດສະບານ/ນະຄອນ.

**16. ວັນທີ ເດືອນ ປີ:**

ວັນທີ ເດືອນ ປີ ໃຫ້ພິມຕາມວັນທີ່ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ , ເທດສະບານ, ນະຄອນ ລົງລາຍເຊັນ.

ໃນກໍລະນີຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ມີການມອບສິດໃຫ້ຜູ້ຮອງຮັບຜິດຊອບວຽກງານແທນຊົ່ວຄາວ ກ່ອນເຊັນໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ຂອງບຸກຄົນ ໃຫ້ຂຽນ ຄຳວ່າ “ເຊັນແທນ” ຢູ່ທາງໜ້າຕຳແໜ່ງຫົວໜ້າຫ້ອງການ ພ້ອມທັງຂຽນ ຄຳວ່າ “ຮອງຫົວໜ້າຫ້ອງການ” ໃສ່ກ້ອງຫົວໜ້າຫ້ອງການ.

**ຄ. ທາງດ້ານຫຼັງໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ:**

ທາງດ້ານຫຼັງໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນໄດ້ກຳນົດສິດ, ພັນທະ ແລະ ຂໍ້ຫ້າມຂອງຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ທີ່ດິນ ດັ່ງນີ້:

**1. ສິດ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ ມີ ດັ່ງນີ້:**

1) ຊົມໃຊ້ທີ່ດິນ;

2) ປົກປັກຮັກສາທີ່ດິນ;

3) ໄດ້ຮັບໝາກຜົນຈາກທີ່ດິນ ຊຶ່ງຈະໄດ້ຮັບບາງກໍລະນີ ເຊັ່ນ ຜົນຜະລິດ (ເກັບກູ້ ໝາກຜົນ ຫຼື ລາຍໄດ້ຈາກທີ່ດິນ);

4) ສືບທອດສິດນຳໃຊ້ທີ່ດິນ.

**2. ພັນທະ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້ ມີ ດັ່ງນີ້:**

1) ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມແຜນຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນ;

2) ປົກປັກຮັກສາທີ່ດິນໃຫ້ຢູ່ໃນສະພາບດີບໍ່ໃຫ້ເຊາະເຈື່ອນຍຸບລົງ, ເຊື່ອມໂຊມ ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;

3) ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນສັນຍາການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້;

4) ເສຍອາກອນທີ່ດິນປະຈຳປີ, ເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນຕາມລະບຽບການ;

5) ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;

6) ປະຕິບັດຕາມກົດໝາຍອື່ນທີ່ກ່ຽວຂ້ອງ.

**3. ຂໍ້ຫ້າມ ສຳລັບການໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້ ມີ ດັ່ງນີ້:**

1) ຫ້າມ ເອົາສິດນຳໃຊ້ທີ່ດິນປ່າໄມ້ໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກໃຫ້ຜູ້ອື່ນທີ່ບໍ່ແມ່ນສາຍຍາດ ຫຼື ແລກປ່ຽນ ສິດນຳໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ;

2) ຫ້າມ ເອົາສິດນຳໃຊ້ທີ່ດິນປ່າໄມ້ ຈາກສິດໄດ້ຮັບໝາກຜົນຈາກທີ່ດິນ ໄປໃຫ້ບຸກຄົນອື່ນ ເຊົ່າ ແລະ ຄ້ຳປະກັນ;

3) ຫ້າມ ນຳໃຊ້ສິດນຳໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງທີ່ມີສິດຕົກ

ລົງຕາມກົດໝາຍ;

4) ຫ້າມລະເມີດເງື່ອນໄຂທີ່ໄດ້ກຳນົດໄວ້ ໃນສັນຍາການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້.

## ໝວດທີ 4
## ການໃສ່ບາໂຄດ ແລະ ປະທັບຕາໃສ່
## ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ

**ມາດຕາ 6 ການໃສ່ບາໂຄດ**

ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ຕ້ອງໃສ່ບາໂຄດ ໂດຍໃຫ້ໃສ່ເບື້ອງເທິງຂໍ້ມູນຕົວເລກກ່ຽວກັບທີ່ຕັ້ງຕອນດິນ ຂອງໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ.

**ມາດຕາ 7 ການປະທັບຕາ**

ການປະທັບຕາ ຕ້ອງປະທັບຕາເຕັ່ງໃສ່ລາຍເຊັນ ຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ. ການປະທັບຕາ ໃຫ້ປະທັບໃສ່ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ຢ່າງຊັດເຈນ ແລະ ຊື່ຕົງ, ກວມເອົາໜຶ່ງສ່ວນສາມຂອງລາຍເຊັນມາທາງເບື້ອງຊ້າຍ ໂດຍບໍ່ໃຫ້ທັບ ຫຼື ກວມເອົາຕຳແໜ່ງ ຂອງຜູ້ລົງລາຍເຊັນ ບໍ່ໃຫ້ປະທັບຕາກ່ອນລົງລາຍເຊັນ ແລະ ບໍ່ໃຫ້ປະທັບຕາໃສ່ໃນໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ທີ່ບໍ່ມີລາຍເຊັນ. ຊື່ ແລະ ນາມສະກຸນ ຂອງຜູ້ເຊັນໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນໃຫ້ຈ້ຳຂະໜານ ແລະ ຕັ້ງສາກກັບຕຳແໜ່ງຜູ້ເຊັນ. ຊື່ ແລະ ນາມສະກຸນ ໃຫ້ຈ້ຳກາຊື່ຂອງຜູ້ລົງລາຍເຊັນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 8 ການຈັດຕັ້ງປະຕິບັດ**

ໃຫ້ກົມທີ່ດິນ ເປັນຜູ້ຊີ້ນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ອົງການປົກຄອງທ້ອງຖິ່ນ, ທຸກພາກສ່ວນທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 9 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 7 ມັງກອນ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ນ.ບຸນຄຳ ວໍລະຈິດ